# ມະຕິ ກອງປະຊຸມ
# ວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V

-----------------------------

ກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V ໄດ້ດຳເນີນແຕ່ວັນທີ 17-18 ພະຈິກ 2022 ທີ່ ຫ້ອງປະຊຸມໃຫຍ່ ຂອງຫ້ອງວ່າການສູນກາງພັກ (ຫຼັກ 6) ພາຍໃຕ້ຫົວຂໍ້: **"ເພີ່ມທະວີການນຳພາ ຂອງພັກ, ສ້າງການຫັນປ່ຽນໃໝ່ຢ່າງແຂງແຮງ, ເລິກເຊິ່ງ ວຽກງານການເມືອງ-ແນວຄິດ, ທິດສະດີ ຂອງພັກ ເຂົ້າສູ່ຄຸນນະພາບໃໝ່"** ໂດຍການເປັນປະທານຂອງ ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປ ລາວ, ມີບັນດາສະຫາຍກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ກຳມະການສູນກາງພັກ, ເລຂາຄະນະພັກກະຊວງ, ອົງການ, ແຂວງ, ບັນດາສະຫາຍຮອງເລຂາຄະນະພັກ, ຄະນະປະຈຳພັກ ຜູ້ຊີ້ນຳວຽກງານພັກ-ພະນັກງານ, ຫົວໜ້າຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງວຽງຈັນ, ບັນດາສະຫາຍທີ່ເຮັດວຽກງານໂຄສະນາອົບຮົມ ຂອງກະຊວງ, ອົງການກ່ຽວຂ້ອງ ເຂົ້າຮ່ວມທັງໝົດ 212 ສະຫາຍ, ຍິງ 38 ສະຫາຍ.

ກອງປະຊຸມ ໄດ້ຮັບຟັງການລາຍງານ, ຄົ້ນຄວ້າ, ປຶກສາຫາລື, ປະກອບຄຳເຫັນ ຢ່າງເລິກເຊິ່ງ, ພາວະວິໄສ ບົນຈິດໃຈແຫ່ງການຍົກສູງຄວາມຮັບຜິດຊອບການເມືອງ ຂອງບັນດາສະຫາຍຜູ້ແທນກອງປະຊຸມ ແລະ ໄດ້ເປັນເອກະພາບກັນຕົກລົງຮັບຮອງເອົາເນື້ອໃນຕົ້ນຕໍ ຂອງກອງປະຊຸມ ດັ່ງນີ້:

1. ກອງປະຊຸມ ໄດ້ຮັບຟັງບົດສະຫຼຸບຕີລາຄາສະພາບວຽກງານການເມືອງ-ແນວຄິດ ແຕ່ປີ 2003 ເຖິງປັດຈຸບັນ ສະເໜີໂດຍ ສະຫາຍ ຄຳພັນ ເຜີຍຍະວົງ ເລຂາທິການສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ປະທານສະພາທິດສະດີສູນກາງພັກ, ຜູ້ປະຈຳການ ຄະນະຊີ້ນຳກະກຽມກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V.

- ກອງປະຊຸມ ໄດ້ຊີ້ໃຫ້ເຫັນວ່າ ໃນສອງທົດສະວັດ ຂອງຕົ້ນສະຕະວັດທີ 21 ນີ້ ໂລກໄດ້ຜ່ານຫຼາຍເຫດການທີ່ສຳຄັນ ທາງດ້ານການເມືອງ, ເສດຖະກິດ-ສັງຄົມ, ຄວາມໝັ້ນຄົງ, ຄວາມກ້າວໜ້າດ້ານເຕັກນິກ-ເຕັກໂນໂລຊີ, ນະວັດຕະກຳ, ໄພທຳມະຊາດ, ການລະບາດ ຂອງພະຍາດໂຄວິດ-19 ແລະ ອື່ນໆ, ໄດ້ສ້າງການປ່ຽນແປງທີ່ເລິກເຊິ່ງ ແລະ ກ້າວກະໂດດ ໃນຊີວິດ ຂອງມວນມະນຸດ ເຊິ່ງໄດ້ສົ່ງຜົນກະທົບ ທັງດ້ານຕັ້ງໜ້າ ແລະ ຫຍໍ້ທໍ້ ຕໍ່ແນວຄິດ, ຈິດຕະສາດ ຂອງພະນັກງານ, ສະມາຊິກພັກ ແລະ ປະຊາຊົນ, ແຕ່ພາຍໃຕ້ການນຳພາ-ຊີ້ນຳ ຂອງສູນກາງພັກ, ຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບ ຂອງຄະນະພັກແຕ່ລະຂັ້ນ ກໍ່ຄືມູນເຊື້ອຄວາມສາມັກຄີ, ນ້ຳໃຈຮັກຊາດ, ຄວາມເປັນເຈົ້າ ຂອງປະຊາຊົນລາວບັນດາເຜົ່າ, ການນຳພາປະຕິບັດສອງໜ້າທີ່ຍຸດທະສາດ ສືບຕໍ່ມີຄວາມໜັກແໜ້ນ, ເຂັ້ມແຂງ ແລະ ເຕີບໃຫຍ່ຂະຫຍາຍຕົວຂຶ້ນ ຢ່າງບໍ່ຢຸດຢັ້ງ; ການຄົ້ນຄວ້າທິດສະດີ ແລະ ສະຫຼຸບພຶດຕິກຳ ຂອງພັກເຮົາ ໄດ້ເປັນພື້ນຖານສຳຄັນ ໃຫ້ແກ່ການວາງແນວທາງການເມືອງ, ແນວທາງການຈັດຕັ້ງ ມີຄວາມຖືກຕ້ອງ, ສອດຄ່ອງ ກັບສະພາບຈຸດພິເສດ ກໍ່ຄືລະດັບການຂະຫຍາຍຕົວ ຂອງເສດຖະກິດ-ສັງຄົມ ປະເທດເຮົາ ແລະ ທ່າອ່ຽງລວມ ຂອງຍຸກສະໄໝ, ຮັບປະກັນໃຫ້



CamScanner

ປະເທດຊາດ ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມ ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ; ພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າ ມີຄວາມເຊື່ອໝັ້ນຕໍ່ການນໍາພາ ຂອງພັກ, ມີຄວາມເປັນເອກະພາບສູງ ຕໍ່ແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການ ຂອງພັກ, ຈົງຮັກພັກດີ ຕໍ່ພັກ, ຕໍ່ອຸດົມການສັງຄົມນິຍົມ ແລະ ລະບອບປະຊາທິປະໄຕປະຊາຊົນ, ມີຄວາມສາມັກຄີເປັນປຶກແຜ່ນ ຢູ່ອ້ອມຂ້າງພັກ, ໃຫ້ການສະໜັບສະໜູນ ແລະ ຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ ຂອງພັກ, ນະໂຍບາຍ ແລະ ກົດໝາຍ ຂອງລັດ ຢ່າງເປັນຂະບວນກວ້າງຂວາງ. ທັງໝົດນັ້ນ ໄດ້ສ້າງໜໍ່ແໜງປັດໄຈໃໝ່ທີ່ສໍາຄັນ ທາງດ້ານການເມືອງ, ແນວຄິດ-ທິດສະດີ ຂອງພັກ ເພື່ອຍູ້ແຮງການສ້າງການຫັນປ່ຽນໃໝ່ ໃນການສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວເດີນຕາມເສັ້ນທາງ ແລະ ຈຸດໝາຍສູ່ສັງຄົມນິຍົມ ຢູ່ປະເທດເຮົາ.

- ພ້ອມກັນນັ້ນ, ກອງປະຊຸມ ຍັງໄດ້ພ້ອມກັນປະກອບຄວາມຄິດເຫັນ ຕໍ່ວຽກງານສຶກສາອົບຮົມການເມືອງ-ແນວຄິດ ດ້ວຍຄວາມຮັບຜິດຊອບ ແລະ ເປັນເອກະພາບກັນຢ່າງສູງ ຕໍ່ການຕີລາຄາ ບັນດາຂໍ້ຄົງຄ້າງ, ຄວາມຂາດຕົກບົກພ່ອງ ໃນການນໍາພາ-ຊີ້ນໍາວຽກງານການເມືອງ-ແນວຄິດ ແລະ ທິດສະດີ ຂອງພັກ ກໍ່ຄືສະພາບການເມືອງ-ແນວຄິດ ໃນໄລຍະຜ່ານມາ ພ້ອມທັງຊີ້ໃຫ້ເຫັນບັນດາສາເຫດຕົ້ນຕໍ ເພື່ອກໍານົດທິດທາງ, ວິທີການ ແລະ ມາດຕະການປັບປຸງ, ແກ້ໄຂ ຢ່າງຈິງຈັງ ແລະ ສອດຄ່ອງ ກັບການເລັ່ງທວງ ຂອງສະພາບການຕ່າງໆ ໃນຊຸມປີຕໍ່ໜ້າ.

- ກອງປະຊຸມ ໄດ້ເປັນເອກະພາບກັນ ຖອດຖອນບົດຮຽນ ແຫ່ງພຶດຕິກໍາຕົວຈິງ ຂອງວຽກງານການເມືອງ-ແນວຄິດ ດັ່ງນີ້:

(1) ສືບຕໍ່ຍຶດໝັ້ນ ແລະ ໝູນໃຊ້ ທິດສະດີມາກ-ເລນິນ ຢ່າງປະດິດສ້າງ, ສອດຄ່ອງກັບສະພາບຈຸດພິເສດ ຂອງປະເທດເຮົາ ຕິດພັນກັບການຄົ້ນຄວ້າຜັນຂະຫຍາຍ ແນວຄິດ ໄກສອນ ພົມວິຫານ, ສືບທອດ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມ ຂອງພັກ, ບູລະນະແນວທາງ, ແຜນນະໂຍບາຍ ຂອງພັກ ໃຫ້ສອດຄ່ອງກັບສະພາບເງື່ອນໄຂໃໝ່ແຕ່ລະໄລຍະ, ຄົ້ນຄວ້າກໍາແໜ້ນ ແລະ ເປັນເຈົ້າການຜັນຂະຫຍາຍ ໃຫ້ເປັນແຜນງານ, ເປັນໂຄງການລະອຽດ ທັງມີການຊີ້ນໍາ-ບັນຊາຢ່າງແທດເຖິງ, ທັນການ ແລະ ຕໍ່ເນື່ອງ ເປັນອົງປະກອບສໍາຄັນຮັບປະກັນ ໃຫ້ແກ່ການເຄື່ອນໄຫວວຽກງານການເມືອງ-ແນວຄິດ;

(2) ຕ້ອງຍົກລະດັບການຄົ້ນຄວ້າ ທິດສະດີ-ພຶດຕິກໍາ ເພື່ອນໍາໄປເຖິງການອະທິບາຍ, ຕອບແກ້ບັນຫາທີ່ຕັ້ງຂຶ້ນ, ເປີດທາງໃຫ້ແກ່ການເຄື່ອນໄຫວບຸກເບີກປະດິດສ້າງໃໝ່ ແລະ ສ້າງການຫັນປ່ຽນໃໝ່ ໃນການຄົ້ນຄິດ, ການເຄື່ອນໄຫວ, ພ້ອມທັງຍົກລະດັບຄວາມສາມາດ ໃນການນໍາພາ ຂອງຖັນແຖວພະນັກງານ, ສະມາຊິກພັກ, ເປັນເຈົ້າການຈັດຕັ້ງນໍາພາການຜັນຂະຫຍາຍ ເຂົ້າສູ່ຕົວຈິງ, ມີຄວາມຮັບຜິດຊອບ ແລະ ບັນລຸໝາກຜົນຕົວຈິງ;

(3) ການເຮັດວຽກງານການເມືອງ-ແນວຄິດ ຕ້ອງຕິດແໜ້ນກັບວຽກງານຈັດຕັ້ງພັກ-ພະນັກງານ, ວຽກງານເສດຖະກິດ ແລະ ການແກ້ໄຂປະກົດການຫຍໍ້ທໍ້ຕົວຈິງ ຢູ່ພາຍໃນພັກ ແລະ ໃນສັງຄົມ, ການເວົ້າ ຕ້ອງໄປຄຽງຄູ່ກັບການກະທໍາ, ຄວາມເປັນແບບຢ່າງນໍາໜ້າ ຂອງສະມາຊິກພັກ, ພະນັກງານ ເພື່ອສ້າງການຫັນປ່ຽນຢ່າງແທ້ຈິງ ແມ່ນໜຶ່ງໃນປັດໄຈຕັດສິນການນໍາພາ ການເມືອງ-ແນວຄິດ;

(4) ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງໃຫ້ສອດຄ່ອງ, ໜັກແໜ້ນ, ຕັດສິນໃຈກໍ່ສ້າງ-ບໍາລຸງຖັນແຖວພະນັກງານໃຫ້ມີຄວາມຮູ້ ມີຄວາມສາມາດ ແລະ ມີຄວາມຊໍານິຊໍານານໃນວິຊາສະເພາະ, ການໃຫ້ຄວາມສໍາຄັນສ້າງເງື່ອນໄຂອໍານວຍຄວາມສະດວກທີ່ຈໍາເປັນ ຕິດພັນກັບທັນເປັນທັນສະໄໝ ແລະ ປັບປຸງກົນໄກຕ່າງໆຢ່າງເໝາະສົມ, ຮອບດ້ານ, ເປັນລະບົບ ສອດຄ່ອງກັບສະພາບຄວາມຮຽກຮ້ອງຕ້ອງການ ແລະ ການເຕີບໃຫຍ່ຂະຫຍາຍຕົວ ຂອງເສດຖະກິດ-ສັງຄົມ ແມ່ນພື້ນຖານສໍາຄັນ ໃນການຂັບເຄື່ອນປະສິດທິຜົນວຽກງານການເມືອງ-ແນວຄິດ ຂອງພັກ.

- ເພື່ອສືບຕໍ່ເສີມຂະຫຍາຍໝາກຜົນ ໃນການນໍາພາຊີ້ນໍາວຽກງານການເມືອງ-ແນວຄິດ ໃນຊຸມປີຜ່ານມາ, ບົນພື້ນຖານສ້າງການຫັນປ່ຽນ ທີ່ແຂງແຮງ ແລະ ເລິກເຊິ່ງ ວຽກງານການເມືອງ-ແນວຄິດ ຂອງພັກເຮົາ, ກອງປະຊຸມ ໄດ້ເປັນເອກະພາບ ຍຶດໝັ້ນ 6 ຫຼັກການ/ທັດສະນະພື້ນຖານ ຂອງພັກ ກ່ຽວກັບວຽກງານການເມືອງ-ແນວຄິດ; ພ້ອມນັ້ນ ກໍ່ກໍານົດ ທິດທາງ, ຄາດໝາຍລວມ ໃນ 5 ປີ ຕໍ່ໜ້າ ຄື:

(1) ທິດທາງ ຂອງວຽກງານການເມືອງ-ແນວຄິດ ໃນຊຸມປີຕໍ່ໜ້າ ຕ້ອງສ່ອງແສງໃຫ້ເຫັນຢ່າງຈະແຈ້ງກ່ຽວກັບຄວາມເປັນເອກະພາບທາງດ້ານແນວຄິດ ຕໍ່ເສັ້ນທາງກ້າວເດີນ ຂອງປະເທດຊາດ ແລະ ຄວາມເປັນອັນໜຶ່ງອັນດຽວ ຂອງຊາດລາວ, ການແກ້ໄຂບັນຫາແນວຄິດ ຖືເປັນພື້ນຖານ ຂອງການແກ້ໄຂບັນຫາທັງໝົດ; ວຽກງານແນວຄິດ ຕິດພັນກັບຄວາມເປັນແບບຢ່າງນໍາໜ້າ ຂອງຄະນະພັກ, ສະມາຊິກພັກ ແລະ ພະນັກງານ; ຍົກສູງບົດບາດນໍາພາ,  ຄວາມເປັນແບບຢ່າງ ແລະ ລັກສະນະນໍາໜ້າ ຂອງພັກເຮົາ ໃນການນໍາພາແກ້ໄຂບັນຫາຕົວຈິງ ຢູ່ພາຍໃນພັກ ແລະ ໃນສັງຄົມ;

(2) ຄາດໝາຍໃຫຍ່ ຂອງວຽກງານການເມືອງ-ແນວຄິດ ທີ່ຕ້ອງໄດ້ບັນລຸ ແມ່ນຕ້ອງຖືຈຸດໝາຍລວມແຫ່ງການນໍາພາປະເທດຊາດ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມ ຕິດພັນກັບການຍົກສູງນໍ້າໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ ເຊິ່ງສະແດງອອກ ຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ເສີມສ້າງຄວາມສາມັກຄີເປັນປຶກແຜ່ນ, ສ້າງຊາດລາວ ໃຫ້ມັ່ງຄັ່ງເຂັ້ມແຂງ, ປະຊາຊົນ ຮັ່ງມີຜາສຸກ, ສັງຄົມ ມີປະຊາທິປະໄຕ, ຍຸຕິທໍາ ແລະ ສີວິໄລ ເປັນພື້ນຖານສໍາຄັນ.

- ເພື່ອບັນລຸທິດທາງ, ຄາດໝາຍລວມນັ້ນ ກອງປະຊຸມ ໄດ້ຮັບຮອງເອົາ 7 ວຽກງານຈຸດສຸມ ເພື່ອສູ້ຊົນຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ເປັນຈິງ ໂດຍມອບໃຫ້ຄະນະພັກ ແຕ່ລະຂັ້ນຊີ້ນໍາຈັດຕັ້ງດໍາເນີນການຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍ ເນື້ອໃນດັ່ງກ່າວ ໃຫ້ເປັນລະບົບ, ເລິກເຊິ່ງ ແລະ ມີຄວາມເປັນເອກະພາບກັນສູງ ໂດຍສະເພາະແມ່ນບັນດາສະຫາຍສະມາຊິກພັກ-ພະນັກງານ ຕ້ອງເປັນເຈົ້າການຄົ້ນຄວ້າກໍາແໜ້ນ ແລະ ຜັນຂະຫຍາຍ ເຂົ້າສູ່ວຽກງານຕົວຈິງ ຢ່າງປະດິດສ້າງ ແລະ ຍົກສູງຄວາມເປັນແບບຢ່າງນໍາໜ້າ ຈັດຕັ້ງປະຕິບັດໃຫ້ເປັນຮູບປະທໍາຕົວຈິງ.

2. ກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V ຖືເປັນກຽດຢ່າງສູງ ທີ່ໄດ້ຮັບຟັງການໂອ້ລົມ ແລະ ໃຫ້ທິດຊີ້ນໍາຂອງ ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປ ລາວ; ສະຫາຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງ ຕໍ່ຄະນະພັກແຕ່ລະຂັ້ນ ທີ່ໄດ້ເອົາໃຈໃສ່ນໍາພາ-ຊີ້ນໍາ ການຈັດຕັ້ງປະຕິບັດ ວຽກງານການເມືອງ-ແນວຄິດ ໃນຊຸມ



CamScanner

ປີຜ່ານມາ ເຊິ່ງໄດ້ມີຄວາມພະຍາຍາມສ້າງການຫັນປ່ຽນໃໝ່ ທາງດ້ານເນື້ອໃນ ແລະ ຮູບການ ຂອງວຽກງານດັ່ງກ່າວ, ປະກອບສ່ວນສຳຄັນໃຫ້ແກ່ການຍຶດໝັ້ນ, ເສີມຂະຫຍາຍ ແລະ ເພີ່ມເຕີມບັນດາພື້ນຖານດ້ານແນວຄິດ-ທິດສະດີ ຂອງພັກ ແລະ ຫັນເຂົ້າໃນຊີວິດສັງຄົມ, ປຸກລະດົມກຳລັງແຮງສັງລວມ ຂອງທົ່ວປວງຊົນ ເຂົ້າຮ່ວມປະຕິບັດ 2 ໜ້າທີ່ຍຸດທະສາດ ກໍ່ຄື ພາລະກິດປ່ຽນແປງໃໝ່ ຂອງພັກ; ພັກເຮົາ ສາມາດກຳນົດແນວທາງການເມືອງ ແລະ ແນວທາງການຈັດຕັ້ງ ອັນເປັນພື້ນຖານໄດ້ຢ່າງຖືກຕ້ອງ, ການຈັດຕັ້ງພັກ ໄດ້ຮັບການປັບປຸງກາຍເປັນກຳລັງການເມືອງ ທີ່ເຂັ້ມແຂງ, ຕອບສະໜອງພື້ນຖານແຫ່ງການກຳອຳນາດ ແລະ ການຮັບໃຊ້ປະຊາຊົນ ຂອງພັກເຮົາ.

ເຖິງຢ່າງໃດກໍ່ຕາມ ເມື່ອເວົ້າເຖິງບັນຫາທີ່ຕັ້ງຂຶ້ນ ຕໍ່ວຽກງານການເມືອ-ແນວຄິດ, ສະຫາຍເລຂາທິ ການໃຫຍ່ ໄດ້ຊີ້ໃຫ້ເຫັນຄວາມຮັບຜິດຊອບ ທີ່ບໍ່ອາດຈະປະຕິເສດໄດ້ ຂອງຄະນະພັກແຕ່ລະຂັ້ນ ເຊິ່ງເລັ່ງທວງໃຫ້ພັກເຮົາ ຕ້ອງຮີບຮ້ອນດຳເນີນການປັບປຸງ, ແກ້ໄຂຢ່າງຈິງຈັງ ເປັນຕົ້ນ ແມ່ນເນື້ອໃນການເຄື່ອນໄຫວດ້ານການເມືອງ-ແນວຄິດ ຫຼາຍອັນຫ່າງເຫີນຈາກຕົວຈິງ, ບໍ່ທັນອຸດົມສົມບູນ; ການຄົ້ນຄວ້າທາງດ້ານທິດສະດີ ແລະ ສະຫຼຸບພຶດຕິກຳ ຍັງບໍ່ທັນຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ, ມີຫຼາຍບັນຫາທີ່ເປັນພື້ນຖານທິດສະດີບໍ່ທັນໄດ້ຄົ້ນຄວ້າຢ່າງເລິກເຊິ່ງ; ການຕໍ່ສູ້ຕ້ານບັນດາປະກົດການຫຍໍ້ທໍ້, ການຕອບໂຕ້ຕໍ່ຖ້ອຍທຳນອງບິດເບືອນໃສ່ຮ້າຍປ້າຍສີ ຕໍ່ການນຳພາຄຸ້ມຄອງ ຂອງພັກ-ລັດ ຍັງບໍ່ທັນແຂງແຮງ ແລະ ທັນການ; ການປຸກລະດົມຊອນເຊື່ອມະຫາຊົນ ເຂົ້າຮ່ວມບັນດາກິດຈະກຳການເມືອງ-ສັງຄົມ ຍັງບໍ່ທັນກວ້າງຂວາງ, ແຂງແຮງ ແລະ ເຂົ້າສູ່ລວງເລິກ, ເຮັດໃຫ້ການຍົກສູງສະຕິຕື່ນຕົວ ຮັກຊາດ, ການພັດທະນາ ແລະ ຄວາມເປັນເຈົ້າປະຕິບັດສິດ, ພັນທະຕາມກົດໝາຍ ຂອງພົນລະເມືອງລາວ ຈຳນວນໜຶ່ງບໍ່ທັນສູງ; ທັດສະນະ ແລະ ການກະທຳ ກໍ່ຄື ຫຼັກໝັ້ນຊົນຊັ້ນກຳມະກອນ, ທາດແທ້ມູນເຊື້ອປະຕິວັດ ໃນຖັນແຖວພະນັກງານ, ສະມາຊິກພັກສ່ວນໜ້ອຍໜຶ່ງ ໄດ້ບັ່ນທອນຄວາມເຊື່ອໝັ້ນສັດທາ ຂອງປະຊາຊົນ; ປະກົດການ ທີ່ພະນັກງານ, ສະມາຊິກພັກ ຈຳນວນບໍ່ໜ້ອຍ ຍັງຕົກໃນສະພາບນໍ້າໃຈເສຍສະຫຼະ ເພື່ອຜົນປະໂຫຍດສ່ວນລວມ ຍັງຕໍ່າ ແລະ ບໍ່ກ້າຕໍ່ສູ້ຕ້ານກັບທ່າອ່ຽງ ແລະ ປະກົດການຜິດເຂວ, ປະກົດການເລືອກວຽກ ກໍ່ຄື ການສວຍໃຊ້ຕຳແໜ່ງ, ໜ້າທີ່ ໂດຍບໍ່ຖືກຕ້ອງ, ຊອບທຳ; ພ້ອມນັ້ນ ການສະກັດກັ້ນ ແລະ ການແກ້ໄຂ ນັບທັງການແກ້ໄຂປະກົດການຫຍໍ້ທໍ້ຕ່າງໆໃນສັງຄົມ ຍັງບໍ່ທັນວ່ອງໄວ, ທັນການ ແລະ ບໍ່ເດັດຂາດ ເຂັ້ມງວດ... ສະພາບດັ່ງກ່າວນັ້ນ ແມ່ນຄວາມຮັບຜິດຊອບໂດຍກົງ ຂອງຄະນະພັກແຕ່ລະຂັ້ນ ກໍ່ຄື ຄະນະໂຄສະນາອົບຮົມ ແລະ ພາກສ່ວນກ່ຽວຂ້ອງໃນການເປັນເສນາທິການໃຫ້ສູນກາງພັກ, ລັດຖະບານ ສືບຕໍ່ຄົ້ນຄວ້າ, ສະເໜີທິດນຳ, ວິທີການ ແລະ ມາດຕະການຕົວຈິງ ເພື່ອແກ້ໄຂບັນຫາ ແລະ ຍົກລະດັບຄຸນນະພາບວຽກງານການເມືອງ-ແນວຄິດ ໃຫ້ມີການຫັນປ່ຽນທີ່ແຂງແຮງ ແລະ ເລິກເຊິ່ງແທ້;

ອີງໃສ່ສະພາບແວດລ້ອມ ທັງພາຍໃນ ແລະ ຜົນກະທົບຈາກພາຍນອກ ໃນປັດຈຸບັນ ກໍ່ຄືໃນຊຸມປີຕໍ່ໜ້ານີ້, ປະເທດ ຂອງພວກເຮົາ ຍັງຈະມີກາລະໂອກາດ, ມີຂໍ້ສະດວກທີ່ເປັນພື້ນຖານຫຼາຍດ້ານ, ພ້ອມນັ້ນກໍ່ປະເຊີນໜ້າກັບບັນດາສິ່ງທ້າທາຍໃໝ່ທີ່ສັບສົນ, ຄວາມຫຍຸ້ງຍາກດ້ານເສດຖະກິດ-ສັງຄົມ, ຄວາມຝືດເຄືອງ ໃນການດຳລົງຊີວິດ, ຄວາມແຕກໂຕນດ້ານການພັດທະນາ ຢູ່ແຕ່ລະບ່ອນ, ບັນຫາຫຍໍ້ທໍ້ໃນສັງຄົມ, ການເສື່ອມຖອຍ ຂອງຄວາມເປັນແບບຢ່າງ, ຄວາມໜັກແໜ້ນດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ຂອງ

ສະມາຊິກພັກ, ພະນັກງານ ກໍ່ຄືການຫັນປ່ຽນດ້ວຍຕົນເອງ ແລະ ການຫັນປ່ຽນໂດຍສັນຕິ, ຍັງເປັນບັນຫາກະທົບເຖິງແນວຄິດ-ຈິດໃຈ ແລະ ຊີ້ນຳການກະທຳ ຂອງທຸກຊັ້ນຄົນ ໃນສັງຄົມ ກໍ່ຄື ຕໍ່ຖັນແຖວສະມາຊິກພັກ, ພະນັກງານ ຂອງພວກເຮົາ, ໃນນັ້ນຫຼາຍດ້ານ ພວມ ແລະຍັງຈະສືບຕໍ່ເປັນໜໍ່ແໜງຄວາມສ່ຽງ, ໄພອັນຕະລາຍຕໍ່ຄວາມສະຫງົບທາງການເມືອງ ແລະ ສັງຄົມ, ເປັນສິ່ງທ້າທາຍ ຕໍ່ລະບອບການເມືອງ, ຕໍ່ບົດບາດການນຳພາ ກໍ່ຄື ພາລະກິດປະຕິວັດ ຂອງພັກເຮົາ;

ສະຫາຍເລຂາທິການໃຫຍ່ ຮຽກຮ້ອງໃຫ້ພວກເຮົາ ຕ້ອງໄດ້ເພີ່ມທະວີວຽກງານການເມືອງ-ແນວຄິດ, ທິດສະດີ ຂອງພັກ ໂດຍສຸມໃສ່ລົງເລິກຄົ້ນຄວ້າ, ບັນດາຫຼັກມູນພື້ນຖານທິດສະດີ ມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ສັງລວມ ບັນດາບົດຮຽນປະສົບການ ແລະ ໝູນໃຊ້ຢ່າງປະດິດສ້າງ, ສະດຸ້ງໄວ ຕໍ່ການກຳກາລະໂອກາດ, ຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍ, ເສີມຂະຫຍາຍກຳລັງແຮງສັງລວມໃນທົ່ວສັງຄົມ, ສ້າງການຫັນປ່ຽນໃໝ່ດ້ານເນື້ອໃນ, ຮູບການ ແລະ ວິທີການ ເພື່ອຍົກສູງຄຸນນະພາບ, ປະສິດທິພາບ ຂອງວຽກງານການເມືອງ-ແນວຄິດ ໃນສະພາບເງື່ອນໄຂໃໝ່ ຄື: ຖືວຽກງານການເມືອງ-ແນວຄິດ ເປັນສະໜາມຮົບແຖວໜ້າອັນໜຶ່ງ ໃນວຽກງານ ຂອງພັກເຮົາ, ແນວຮົບນີ້ ມັນຕ້ອງສອດຫ້ອຍເຂົ້າໄປໝົດທຸກການເຄື່ອນໄຫວ ຂອງພັກ, ຂອງລັດ, ຂອງອົງການຈັດຕັ້ງມະຫາຊົນ, ຂອງທຸກຊັ້ນຄົນ ໃນສັງຄົມເໝືອນດັ່ງສາຍເລືອດ ທີ່ຫຼໍ່ລ້ຽງຮ່າງກາຍຂອງຄົນເຮົາ. ການທີ່ຖືວຽກງານການເມືອງ-ແນວຄິດ ປຽບເໝືອນສະໜາມຮົບ ຕ້ອງເວົ້າເຖິງການຕໍ່ສູ້ ເຊິ່ງແມ່ນການຕໍ່ສູ້ ລະຫວ່າງ ອັນຖືກກັບອັນຜິດ ຢູ່ໃນກະໂຕສະມາຊິກພັກເຮົາ ເພື່ອໃຫ້ແຕ່ລະຄົນເອົາຊະນະແນວຄິດແລະ ການກະທຳ ຂອງຕົນເອງ ເຮັດໃຫ້ການຕໍ່ສູ້ນີ້ກ້າວໄປເຖິງຈຸດໝາຍ ທີ່ວ່າ: ຄວາມຖືກ ຕ້ອງ, ເປັນທຳນັ້ນຕ້ອງຕີຖອຍແນວຄິດຜິດເຂວ ອອກໄປ, ສຸດທ້າຍແນວຄິດຖືກຕ້ອງ, ການກະທຳທີ່ຖືກ ຕ້ອງເອົາຊະນະແນວຄິດບໍ່ຖືກຕ້ອງ ແລະ ຜິດເຂວ ໃຫ້ໄດ້, ເດັດດ່ຽວ ບໍ່ປ່ອຍໃຫ້ຄວາມຄິດ ແລະ ການກະທຳທີ່ຜິດເຂວ ກືນກິນເນື້ອທີ່ ແລະ ຄອບງຳມັນສະໝອງ ຫຼື ແນວຄວາມຄິດ ຂອງສະມາຊິກພັກ ແລະ ປະຊາຊົນເຮົາ ໄດ້ເປັນອັນຂາດ. ຕ້ອງສ້າງຄວາມເຊື່ອໝັ້ນໃຫ້ປະຊາຊົນ ດ້ວຍການກະທຳຕົວຈິງ, ສະມາຊິກພັກ, ການນຳ ຂອງພັກໃນທຸກຂັ້ນຕ້ອງຖືເອົາປະຊາຊົນ ເປັນໃຈກາງ, ເອົາປະຊາຊົນເປັນກົກ, ເອົາຮາກຖານເປັນເປົ້າ ໝາຍ ຂອງການພັດທະນາແລະ ການແກ້ໄຂບັນຫາ; ປະຕິບັດຄຳຂວັນທີ່ວ່າ: ພັກເຮົາແມ່ນມາຈາກປະຊາຊົນ, ຮັບໃຊ້ປະຊາຊົນຢ່າງບໍລິສຸດໃຈ ຢ່າງບໍ່ມີເງື່ອນໄຂໃດໆ...

3. ກອງປະຊຸມວຽກງານການເມືອງ-ແນວຄິດທົ່ວ ປະເທດ ຄັ້ງທີ V ສະແດງຄວາມຍ້ອງຍໍຊົມເຊີຍສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ, ຜູ້ປະກອບການ, ປະຊາຊົນລາວບັນດາເຜົ່າ, ບັນດາຊັ້ນຄົນ ທີ່ຍາມໃດກໍ່ເສີມຂະຫຍາຍມູນເຊື້ອຄວາມສາມັກຄີເປັນປຶກແຜ່ນໃນທົ່ວປວງຊົນ, ມີຄວາມອຸ່ນອຽນ, ມີຄວາມເປັນເອກະພາບ, ສະໜັບສະໜູນແນວທາງການເມືອງ ຂອງພັກ, ເຊື່ອໝັ້ນ ຕໍ່ການນຳພາ ຂອງພັກ ແລະ ການຄຸ້ມຄອງ ຂອງລັດ, ຕັ້ງໜ້າປະກອບສ່ວນ ເຂົ້າໃນພາລະກິດປະຕິວັດ ກໍ່ຄືການປົກປັກຮັກສາ ແລະ ສ້າງ ສາປະເທດຊາດ ຕະຫຼອດໄລຍະຜ່ານມາ ແລະ ສືບຕໍ່ປົກປັກຮັກສາມູນເຊື້ອອັນດີງາມນັ້ນ ເພື່ອສ້າງເປັນກຳລັງແຮງສຳຄັນໃຫ້ແກ່ການສ້າງພື້ນຖານ ແລະ ທ່າວງທ່າ ໃນການນຳເອົາປະເທດເຮົາ ຫຼຸດພົ້ນອອກຈາກສະຖານະ ພາບດ້ອຍພັດທະນາ ໃນຕໍ່ໜ້າ.



CamScanner

4. ກອງປະຊຸມ ມອບໃຫ້ຄະນະພັກກະຊວງ, ອົງການ ແລະ ທ້ອງຖິ່ນ ນຳເອົາເນື້ອໃນຈິດໃຈ ຂອງບົດສະຫຼຸບຕີລາຄາສະພາບວຽກງານການເມືອງ-ແນວຄິດ ຕໍ່ກອງປະຊຸມຄັ້ງນີ້ ແລະ ຄຳເຫັນຊີ້ນຳ ຂອງສະຫາຍເລຂາທິການໃຫຍ່ ໄປຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ແລະ ຜັນຂະຫຍາຍຈັດຕັ້ງປະຕິບັດ ເຂົ້າສູ່ຂະບວນການວຽກງານຕົວຈິງ; ເອົາໃຈໃສ່ນຳພາ-ຊີ້ນຳ ວຽກງານການເມືອງ-ແນວຄິດ, ຍົກສູງບົດບາດຄວາມຮັບຜິດຊອບ ລວມຂອງໝູ່ຄະນະ ແລະ ຂອງແຕ່ລະສະຫາຍໃນຄະນະພັກ ຕໍ່ວຽກງານການເມືອງ-ແນວຄິດ; ເປັນເຈົ້າການຕິດຕາມ, ກຳສະພາບບັນຫາເລັ່ງຫວງ ຂອງຂະແໜງການ ແລະ ທ້ອງຖິ່ນຕົນ ເພື່ອສະໜອງຂໍ້ມູນທີ່ຊັດເຈນ ແລະ ຈັດຕັ້ງແກ້ໄຂບັນຫາໃຫ້ເປັນຮູບປະທຳ, ສ້າງຄວາມເຂົ້າໃຈເປັນເອກະພາບພາຍໃນລະບົບການເມືອງປະຊາທິປະໄຕປະຊາຊົນ ແລະ ໃນທົ່ວສັງຄົມ; ບັນດາອົງການເສນາທິການ ທີ່ເຮັດໜ້າທີ່ໃນຂົງເຂດການ ເມືອງ-ແນວຄິດ ແລະ ທິດສະດີ ຂອງພັກ ເປັນເຈົ້າການຍົກລະດັບຄວາມຮູ້ຄວາມສາມາດ ໃນການຄົ້ນຄວ້າ ແລະ ເຄື່ອນໄຫວປະຕິບັດພາລະບົດບາດ ຂອງຕົນໃຫ້ສູງຂຶ້ນ, ສາມາດເປັນເສນາທິການທີ່ເຂັ້ມແຂງ, ເອົາການເອົາງານ ຊ່ວຍຄະນະພັກຂັ້ນຂອງຕົນ;

- ມອບໃຫ້ຄະນະພັກແຂວງ, ກະຊວງ, ອົງການ ຈັດຕັ້ງດຳເນີນກອງປະຊຸມວຽກງານການເມືອງ-ແນວຄິດ ຂັ້ນຂອງຕົນ ໃຫ້ເປັນປົກກະຕິ ແລະ ເປັນລະບົບຕໍ່ເນື່ອງ ປະຈຳປີ ແລະ 5 ປີ ພ້ອມທັງປັບປຸງການຈັດຕັ້ງ ແລະ ພະນັກງານ ທີ່ເຮັດວຽກງານນີ້ ໃຫ້ສາມາດເປັນເສນາທິການທີ່ເຂັ້ມແຂງ ຂອງຄະນະພັກຕົນ.

- ມອບໃຫ້ຄະນະໂຄສະນາອົບຮົມສູນກາງພັກ ຮີບຮ້ອນອອກຄຳແນະນຳ ກ່ຽວກັບການຈັດຕັ້ງຜັນຂະຫຍາຍເນື້ອໃນກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V ໂດຍໄວ, ພ້ອມນັ້ນ ກໍ່ສືບຕໍ່ຄົ້ນຄວ້າສ້າງນິຕິກຳທີ່ຈຳເປັນ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານການເມືອງ-ແນວຄິດ ມີຄວາມຄ່ອງຕົວ ແລະ ມີປະສິດທິຜົນ;

- ອົງການເສນາທິການ ຂອງຄະນະພັກແຕ່ລະຂັ້ນ ເພີ່ມທະວີຄວາມເປັນເຈົ້າການຊ່ວຍຄະນະພັກ ຕິດຕາມ, ຊຸກຍູ້ ແລະ ແນະນຳ ການຈັດຕັ້ງປະຕິບັດວຽກງານການເມືອງ-ແນວຄິດ ໃນອົງຄະນະພັກຂັ້ນຕົນ ຢ່າງເປັນປົກກະຕິ ແລະ ລາຍງານສະພາບການຈັດຕັ້ງປະຕິບັດ ໃຫ້ຄະນະພັກຂັ້ນເທິງຮັບຊາບ ເພື່ອໃຫ້ທິດຊີ້ນຳ ຢ່າງແທດເຖິງ ແລະ ທັນເວລາ.

ນະຄອນຫຼວງວຽງຈັນ, ວັນທີ 13 ທັນວາ 2022

**ຕ. ຄະນະປະທານກອງປະຊຸມ**

**ຜູ້ປະຈຳການ ຄະນະເລຂາທິການສູນກາງພັກ**

**ປອ ບຸນທອງ ຈິດມະນີ**



CS CamScanner